**ມິຊຊາສົມໂພດພຣະຕຣີເອກະນຸພາບ**

**ວັນອາທິດທີ 12 ມິຖຸນາ 2022**



**ພຣະວໍລະສານໂດຍນັກບຸນຢວງ 16, 12-15**

ເວລາທີ່ພຣະເຢຊູຈາກໂລກເມືອຫາພຣະບິດາໃກ້ຈະມາເຖິງ, ພຣະອົງກ່າວແກ່ພວກລູກສິດວ່າ: "ເຮົາຍັງມີຫລາຍເລື່ອງຈະບອກພວກເຈົ້າອີກ, ພວກເຈົ້າບໍ່ທັນສາມາດເຂົ້າໃຈໄດ້ໃນເວລານີ້. ເມື່ອພຣະຈິດແຫ່ງຄວາມຈິງຈະສະເດັດມາ, ພຣະອົງຈະບອກສອນຄວາມຈິງທຸກຢ່າງໃຫ້ພວກເຈົ້າ. ພຣະຈິດເຈົ້າຈະບໍ່ກ່າວດ້ວຍຕົນເອງ ແຕ່ຈະກ່າວຕາມທີ່ຊົງໄດ້ຍິນມາ, ແລະຈະປະກາດໃຫ້ພວກເຈົ້າຮູ້ເລື່ອງທີ່ຈະເປັນມາໃນພາຍໜ້າດ້ວຍ. ພຣະອົງຈະກ່າວເປັນກຽດແກ່ເຮົາ, ຍ້ອນວ່າ, ພຣະອົງຈະຊົງຮັບເອົາທຸກສິ່ງຈາກເຮົາແລະຈະຂ່າວສິ່ງເຫລົ່ານັ້ນແກ່ພວກເຈົ້າ. ທຸກສິ່ງທີ່ພຣະບິດາຊົງມີຢູ່ກໍເປັນຂອງເຮົາ. ຍ້ອນເຫດນີ້ເຮົາຈຶ່ງໄດ້ກ່າວວ່າ: ພຣະຈິດຈະເອົາສິ່ງທີ່ເປັນຂອງເຮົາມາຂ່າວໃຫ້ພວກເຈົ້າຮູ້."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້, ພຣະກຣິສຕະຈັກສົມໂພດພຣະຕຣີເອກະນຸພາບ, ພຣະເຈົ້າໜຶ່ງດຽວແຕ່ເປັນສາມພຣະອົງ. ດ້ວຍເຫດນີ້, ບົດອ່ານໃນມິຊຊາວັນນີ້ຈຶ່ງຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງທຳລ້ຳເລິກແຫ່ງຂໍ້ຄວາມເຊື່ອໃນພຣະຕຣີເອກະນຸພາບນີ້.

ບົດອ່ານທີໜຶ່ງວັນນີ້ຈາກໜັງສືສຸພາສິດໄດ້ບອກພວກເຮົາໃຫ້ຮູ້ເຖິງຄວາມແຕກຕ່າງລະຫວ່າງພຣະເຈົ້າ, ພຣະຜູ້ສ້າງແລະສິ່ງສ້າງຂອງພຣະອົງ. ພຣະເຈົ້າພຣະຜູ້ສ້າງມີນາມຊື່ວ່າ: ອົງແຫ່ງຄວາມສະຫລາດ. ແລະອົງແຫ່ງຄວາມສະຫລາດນີ້ໄດ້ສ້າງພຣະເຈົ້າອີກອົງໜຶ່ງມາຕັ້ງແຕ່ກ່ອນສ້າງໂລກ. ແລະພຣະເຈົ້າອົງນີ້ແມ່ນພຣະບຸດຂອງອົງແຫ່ງຄວາມສະຫລາດ. ສິ່ງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈຂໍ້ຄວາມເຊື່ອຊຶ່ງພວກເຮົາປະກາດໃນບົດຂ້າພະເຈົ້າເຊື່ອເຖິງພຣະເປັນເຈົ້າວ່າດັ່ງນີ້: "ຂ້າພະເຈົ້າເຊື່ອໃນພຣະເຈົ້າໜຶ່ງດຽວ, ພຣະເຢຊູກຣິສໂຕ, ພຣະບຸດອົງດຽວຂອງພຣະເຈົ້າ. ພຣະອົງເກີດມາຈາກພຣະບິດາກ່ອນການເວລາ". ຫລືເວົ້າອີກຢ່າງ, ພຣະເຢຊູແມ່ນພຣະບຸດຂອງພຣະບິດາ. ພຣະອົງເປັນຢູ່ແຕ່ໃດໆແລ້ວ.

ສ່ວນໃນພຣະວໍລະສານວັນນີ້, ນັກບຸນຢວງຜູ້ຂຽນພຣະວໍລະສານໄດ້ບອກພວກເຮົາໃຫ້ຮູ້ເຖິງຄວາມເປັນໜຶ່ງດຽວລະຫວ່າງພຣະບິດາ, ພຣະບຸດແລະພຣະຈິດ. ເພາະກ່ອນທີ່ພຣະເຢຊູເຈົ້າຈະຈາກພວກລູກສິດໄປ, ພຣະອົງກ່າວກັບພວກເຂົາວ່າ: "ເຮົາຈະຄືນເມືອຫາພຣະບິດາ". ແລະພຣະອົງຈະສົ່ງພຣະຈິດລົງມາຢູ່ນຳພວກລູກສິດ ເພື່ອອະທິບາຍໃຫ້ພວກເຂົາເຂົ້າໃຈເຖິງຄຳສອນຂອງພຣະອົງ. ແລະອົງພຣະຈິດນີ້ກໍມາຈາກພຣະບິດາແລະພຣະບຸດ. ດ້ວຍເຫດນີ້, ອົງພຣະຈິດຈຶ່ງກ່າວແຕ່ສິ່ງທີ່ໄດ້ຍິນມາຈາກພຣະບິດາແລະພຣະບຸດ. ເພາະທັງສາມພຣະອົງລ້ວນແຕ່ເປັນໜຶ່ງດຽວກັນ. ແລະເມື່ອພວກເຮົາເຊື່ອຟັງພຣະຈິດເຈົ້າ, ພວກເຮົາກໍເຊື່ອຟັງພຣະບິດາແລະພຣະບຸດ. ແລະຄວາມເຊື່ອກໍຍັງທຳໃຫ້ພວກເຮົາສະໜິດສຳພັນເປັນໜຶ່ງດຽວກັບພຣະບິດາ, ພຣະບຸດແລະພຣະຈິດ, ດັ່ງທີ່ນັກບຸນເປົາໂລໄດ້ກ່າວໃນບົດອ່ານທີສອງຂອງວັນນີ້. ດ້ວຍເຫດນີ້, ເມື່ອພວກເຮົາຮັບສິນລ້າງ, ສິນແຫ່ງຄວາມເຊື່ອ, ພວກເຮົາກໍໄດ້ຮັບໃນນາມຂອງພຣະບິດາ, ພຣະບຸດແລະພຣະຈິດ. ແລະທຸກຄັ້ງທີ່ພວກເຮົາເອີ້ນຫາພຣະເຈົ້າ, ພວກເຮົາກໍເອີ້ນຫາພຣະບິດາ, ພຣະບຸດແລະພຣະຈິດ, ດັ່ງທີ່ພວກເຮົາສວດໃນບົດສີມຸງຄຸນ. ແລະດັ່ງທີ່ທຸກຄັ້ງເມື່ອພວກເຮົາທຳເຄື່ອງໝາຍສຳຄັນກາງແຂນ.

**ພາວະນາ**

ໂອພຣະຕຣີເອກະນຸພາບ, ພຣະອົງເປັນໜຶ່ງດຽວໃນຄວາມຮັກແລະຄວາມສະໜິດສຳພັນ, ໂຜດໃຫ້ລູກໄດ້ເປັນໜຶ່ງດຽວກັບພຣະອົງຜ່ານທາງຄວາມຮັກແລະຄວາມສະໜິດສຳພັນກັບພຣະອົງທາງຄວາມເຊື່ອ. ເພື່ອພຣະອົງຈະໄດ້ຢູ່ໃນລູກແລະລູກກໍຢູ່ໃນພຣະອົງດ້ວຍ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ